LAO

AEC Australian Electoral Commission

# ຢຸດ ແລະ ພິຈາລະນາ

## ກວດເບິ່ງແຫຼ່ງຂ່າວການເລືອກຕັ້ງຣັຖບານກາງຄັ້ງນີ້

ໃນຊ່ວງລະຍະການເລືອກຕັ້ງຣັຖບານກາງນີ້ມີຂໍ້ມູນ ຢ່າງຫຼວງຫຼາຍທີ່ພວມແຈກຢາຍຢູ່ນີ້ແມ່ນຕ້ອງການທີ່ຈະໃຫ້ມີອຳນາດຊັກຈູງການລົງຄະແນນຂອງທ່ານ. ມັນເປັນສິ່ງສຳຄັນທີ່ທ່ານຈະພິຈາຣະນາວ່າທ່ານເຫັນຫຍັງ, ໄດ້ຍິນ ຫຼື ອ່ານຫຍັງ. ຖ້າທ່ານມີຄວາມສົງໃສໃດໆ ກ່ຽວກັບຂໍ້ມູນດັ່ງກ່າວ ມັນມີຄຳຖາມຕ່າງໆທີ່ທ່ານສາມາດຖາມເພື່ອຊ່ວຍທ່ານໃນການປະກອບຄວາມເຫັນຂອງຕົວເອງແລ້ວທຳການຕັດສິນໃຈ.

## ບົດບາດຂອງທ່ານໃນການເປັນຜູ້ລົງຄະແນນ

ຈົ່ງໃຊ້ເວລາໃນການພິຈາຣະນາວ່າຂໍ້ມູນ:

### ເຊື່ອຖືໄດ້

**ມັນມາຈາກແຫຼ່ງທີ່ເຊື່ອຖືໄດ້ ຫຼື ບົ່ງບອກຊີ້ຕົວ ໄດ້ບໍ່?**

ທ່ານຮູ້ແຫຼ່ງມາຂອງຂໍ້ມູນນີ້ຫຼືບໍ່? ມັນໄດ້ມາຈາກສາຂາຈຳໜ່າຍຂ່າວສານທີ່ຖືກຮັບຮອງ ຫຼື ບັນຊີສື່ສານໂຊຊຽນທີ່ກວດກາໄດ້ຫຼືບໍ່? ກົດໝາຍການອອກສຽງເລືອກຕັ້ງບໍ່ອອກກົດຄວບຄຸມຄວາມຈິງຂອງການສື່ສານ.

### ປັດຈຸບັນ

**ມັນຖືກຈັດພິມຕອນໃດ?**

ພຽງແຕ່ເປັນຍ້ອນວ່າໂພສຕ໌/ບົດຄວາມໄດ້ຖືກແຊຣ໌ ກັນໃນມື້ນີ້ກໍບໍ່ໄດ້ໝາຍຄວາມວ່າມັນເປັນຂ່າວປັດຈຸບັນ. ຈົ່ງກວດເບິ່ງແຫຼ່ງຕົ້ນຕໍ ແລະມື້ພິມອອກສເມີ.

### ຄວາມປອດໄພ

**ມັນອາດຈະເປັນການຫຼອກຕົ້ມ?**

ຖ້າທ່ານມີຄວາມສົງໃສໃນແຫຼ່ງມາຫຼືເນື້ອໃນຂອງຂໍ້ມູນທີ່ພວມອອກສື່ສານທາງໂຊຊຽນ ຫຼືຕາມທາງເວທີດິຈິຕອລອື່ນໆ, ມັນເປັນສິ່ງສຳຄັນທີ່ຕ້ອງຄິດໃຫ້ ຖ້ວນຖີ່ກ່ອນທີ່ຈະພົວພັນນຳ.

ຖ້າເປັນໄປໄດ້,ທ່ານຄວນກວດເບິ່ງລາຍລະອຽດ ການຕິດຕໍ່ຂອງແຫຼ່ງຂໍ້ມູນນັ້ນ.

## ບົດບາດຂອງ AEC

ຄະນະກຳມະການ ການເລືອກຕັ້ງ ແຫ່ງອອສເຕຣເລັຍ (AEC) ເປັນຫ້ອງການທີ່ເປັນເອກກະຣາດ ມີໜ້າທີ່ດຳເນີນການເລືອກຕັ້ງຣັຖບານກາງ. ບົດບາດຂອງ AEC ແມ່ນເພື່ອ:

**ໃຫ້ຂໍ້ມູນທີ່ເຊື່ອຖືໄດ້ກ່ຽວກັບວິທີດຳເນີນການຂອງການເລືອກຕັ້ງ**

AEC ຈະໃຫ້ມີການເຂົ້າເຖິງແບບງ່າຍໆຫາຂໍ້ມູນ ກ່ຽວກັບວ່າຈະລົງທະບຽນ, ລົງຄະແນນຢ່າງໃດ ຫຼື ຈະລົງສມັກເລືອກຕັ້ງຢ່າງໃດ ໂດຍຜ່ານທາງໂຄສະນາຣົນນະຣົງ, ເວັບໄຊຕ໌, ສູນຕິດຕໍ່ພົວພັນ ແລະ ບັນຊີສື່ສານໂຊຊຽນຂອງພວກເຮົາ.

ຖ້າຫາກມີຂໍ້ມູນທີ່ບໍ່ຖືກຕ້ອງກ່ຽວກັບວິທີດຳເນີນການ ຂອງການເລືອກຕັ້ງ, ທາງ AEC ຈະດຳເນີນການແກ້ໄຂຂໍ້ມູນນັ້ນ. ນອກເໜືອຈາກວິທີດຳເນີນການເລືອກຕັ້ງນີ້ແລ້ວ – AEC ບໍ່ມີບົດບາດໃດໆໃນການກວດເບິ່ງຄວາມຈິງຂອງການສື່ສານກ່ຽວກັບການເລືອກຕັ້ງໄດ້.

**ການສອບສວນການມອບອຳນາດຂອງການສື່ສານ ກ່ຽວກັບການເລືອກຕັ້ງ**

ການສື່ສານກ່ຽວກັບການເລືອກຕັ້ງບາງອັນຕ້ອງໄດ້ຮັບການມອບອຳນາດເພື່ອຊ່ວຍທ່ານ ໃຫ້ຮູ້ເຖິງແຫຼ່ງມາຂອງຂໍ້ມູນ. ຈາກການໄດ້ຮັບການຮ້ອງຮຽນ AEC ຈະທຳການ ສອບສວນການສື່ສານກ່ຽວກັບການເລືອກຕັ້ງທີ່ບໍ່ມີການມອບອຳນາດອັນເໝາະສົມ.




aec.gov.au 13 23 26

ອອກອະນຸຍາດໂດຍ ອະທິບໍດີກົມ ການເລືອກຕັ້ງ, Canberra
Authorised by the Electoral Commissioner, Canberra